**ມິຊຊາອາທິດທີ 7 ກຳນົດປາສກາ ປີ A**

**ວັນທີ 24 ພຶດສະພາ 2020**



**ພຣະວໍລະສານໂດຍນັກບຸນຢວງ 17, 1-11ກ**

ເວລາທີ່ພຣະເຢຊູຕ້ອງຈາກໂລກເມືອຫາພຣະບິດາໃກ້ຈະມາເຖິງແລ້ວ ພຣະອົງຊົງເງີຍພຣະພັກຂຶ້ນຟ້າພາວະນາວ່າດັ່ງນີ້: "ໂອພຣະບິດາເຈົ້າ, ເຖິງເວລາແລ້ວ, ໂຜດໃຫ້ກຽດມຸງຄຸນແດ່ລູກເຖີດ, ແລ້ວລູກກໍຈະໃຫ້ກຽດແດ່ພຣະອົງດ້ວຍ. ແລະອາໄສສິດອຳນາດເໜືອທຸກຄົນທີ່ພຣະອົງໄດ້ຊົງປະທານໃຫ້ລູກນັ້ນ, ລູກຈະໄດ້ປະທານຊີວິດນິລັນດອນແກ່ພວກທີ່ພຣະອົງໄດ້ມອບໝາຍໃຫ້. ຊີວິດນິຣັນດອນຄືຮູ້ຈັກພຣະອົງ, ພຣະເປັນເຈົ້າຈິງແທ້ແຕ່ຜູ້ດຽວ, ແລະຮູ້ຈັກຜູ້ພຣະອົງໄດ້ຊົງໃຊ້ມາ ຄືພຣະເຢຊູຄຣິສໂຕເຈົ້າ. ລູກໄດ້ໃຫ້ກຽດມຸງຄຸນແດ່ພຣະອົງຢູ່ໃນແຜ່ນດິນນີ້ ດ້ວຍກະທຳກິດຈະການທີ່ພຣະອົງໄດ້ມອບໝາຍໃຫ້ນັ້ນຈົນສຳເລັດ. ໂອພຣະບິດາເຈົ້າ, ດຽວນີ້ ໂຜດໃຫ້ລູກໄດ້ຮັບກຽດມຸງຄຸນ, ອັນແມ່ນກຽດມຸງຄຸນທີ່ລູກເຄີຍມີຮ່ວມກັບພະອົງແຕ່ກ່ອນສ້າງໂລກ. ລູກໄດ້ໄຂສຳແດງພຣະນາມຂອງພຣະອົງແກ່ພວກທີ່ພຣະອົງໄດ້ເອົາອອກຈາກໂລກມາມອບໃຫ້ລູກ. ພວກເຂົາເປັນຂອງພຣະອົງແລ້ວ. ພຣະອົງໄດ້ມອບພວກເຂົາໃຫ້ລູກ. ພວກເຂົາໄດ້ຖືຕາມຄຳສັ່ງສອນຂອງພຣະອົງ. ດຽວນີ້ພວກເຂົາຮູ້ດີວ່າ ທຸກສິ່ງທີ່ພຣະອົງມອບໃຫ້ລູກນັ້ນມາຈາກພຣະອົງ. ຍ້ອນພຣະວາຈາທີ່ພຣະອົງໄດ້ມອບໃຫ້ລູກນັ້ນ, ລູກກໍໄດ້ມອບຕໍ່ໃຫ້ພວກເຂົາ ແລະພວກເຂົາກໍໄດ້ຮັບເອົາທັງຍອມຮັບຢ່າງຈິງແທ້ວ່າ ລູກມາຈາກພຣະອົງ ແລະເຊື່ອວ່າພຣະອົງໄດ້ຊົງໃຊ້ລູກມາ.

ລູກວອນຂໍພຣະອົງເພື່ອພວກເຂົາ. ລູກບໍ່ໄດ້ວອນຂໍເພື່ອໂລກ ແຕ່ເພື່ອພວກທີ່ພຣະອົງໄດ້ຊົງມອບໃຫ້ລູກ, ຍ້ອນພວກເຂົາເປັນຂອງໆພຣະອົງ. ທຸກສິ່ງທີ່ເປັນຂອງລູກກໍເປັນຂອງພຣະອົງ, ແລະທຸກສິ່ງທີ່ເປັນຂອງພຣະອົງກໍເປັນຂອງລູກ, ແລະລູກໄດ້ຮັບກຽດມຸງຄຸນໃນຕົວພວກເຂົາ ລູກຈະບໍ່ຢູ່ໃນໂລກນີ້ອີກແລ້ວ, ແຕ່ພວກເຂົາຍັງຢູ່ໃນໂລກ.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 17, 1-11ກ**

ວັນພະຫັດທີ່ຜ່ານມາ, ພວກເຮົາໄດ້ສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ. ກ່ອນທີ່ພຣະອົງຈະຄືນເມືອຫາພຣະບິດາເຈົ້າເພື່ອຕຽມບ່ອນໄວ້ສຳລັບພວກເຮົາ, ພຣະອົງໄດ້ສັນຍາກັບພວກລູກສິດກໍຄືກັບພວກເຮົາວ່າ ພຣະອົງຈະສົ່ງພຣະຈິດອົງຜູ້ບັນເທົາລົງມາຢູ່ນຳພວກເຮົາຈົນເຖິງວັນສິ້ນໂລກ.

ວັນອາທິດນີ້ໃນບົດອ່ານທີໜຶ່ງຈາກໜັງສືຂອງພວກອັກຄະທຳມະທູດກໍໄດ້ເລົ່າເຖິງເຫດການຫລັງຈາກພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ. ພວກອັກຄະສາວົກກໍໄດ້ພາກັນລົງຈາກພູໝາກກອກແລະກັບສູ່ນະຄອນເຢລູຊາແລມ. ຢູ່ທີ່ນັ້ນ, ພວກເຂົາໄດ້ເປັນຈິດໜຶ່ງໃຈດຽວກັນລໍຖ້າຮັບພຣະຈິດເຈົ້າດ້ວຍການພາວະນາພ້ອມກັບຜູ້ຍິງບາງຄົນ ແລະກໍມີພຣະນາງມາຣີອາມານດາຂອງພຣະເຢຊູເຈົ້າຢູ່ນຳດ້ວຍ.

ສ່ວນໃນພຣະວໍລະສານວັນນີ້ນັກບຸນຢວງໄດ້ເລົ່າໃຫ້ພວກເຮົາຮູ້ຈັກເຖິງເວລາທີ່ພຣະເຢຊູເຈົ້າຈະຮັບທໍລະມານແລະຕາຍໃກ້ເຂົ້າມາແລ້ວ. ສິ່ງທີ່ພຣະອົງກະທຳໃນເວລານີ້ຄືພາວະນາຫາພຣະບິດາເຈົ້າເພື່ອມອບສິ່ງທີ່ຈະເປັນມາກັບພຣະອົງໄວ້ໃນພຣະຫັດຂອງພຣະບິດາ ແລະພຣະອົງກໍໄດ້ມອບພວກລູກສິດຂອງພຣະອົງໄວ້ໃນການດູແລຮັກສາຂອງພຣະບິດາເຈົ້າດ້ວຍ. ເຫດການທັງສອງທີ່ກ່າວມານີ້ ບໍ່ວ່າຈະເປັນການລໍຖ້າພຣະຈິດເຈົ້າກໍຄືກ່ອນທີ່ພຣະເຢຊູເຈົ້າຈະຮັບທໍລະມານແລະຕາຍ, ສິ່ງທີ່ພວກສາວົກ, ພຣະນາງມາຣີອາແລະພຣະເຢຊູເຈົ້າກະທຳຄືການພາວະນາ. ຄຳພາວະນາບໍ່ແມ່ນການກະທຳຂອງຄົນທີ່ຢູ່ໃນຄວາມກັງວົນ, ຢ້ານກົວຕໍ່ສິ່ງທີ່ຈະເປັນມາ ແຕ່ຄຳພາວະນາແມ່ນການສະແດງອອກເຖິງຄວາມເປັນໜຶ່ງດຽວ,ໄວ້ໃຈແລະເຊື່ອໃນຜູ້ທີ່ສາມາດຊ່ວຍພວກເຮົາໃຫ້ຮອດໄດ້ຄືພຣະບິດາເຈົ້າສະຫວັນ.

ທຸກວັນນີ້, ພຣະກຣິສຕະຈັກກໍບໍ່ຢຸດຢ່ອນທີ່ຈະພາວະນາເມື່ອຕ້ອງປະເຊີນໜ້າກັບການທົດສອບ, ອຸປະສັກແລະໄພອັນຕະລາຍຕ່າງໆຢ່າງເຊັ່ນໃນການລະບາດຂອງພະຍາດໂກໂຣນານີ້. ເພາະພວກເຮົາເຊື່ອວ່າຢູ່ບ່ອນໃດມີສອງຫລືສາມຄົນຊຸມນຸມກັນໃນນາມຂອງພຣະເຈົ້າ, ພຣະອົງກໍສະຖິດຢູ່ທີ່ນັ້ນເພື່ອສະດັບຟັງພວກເຮົາ. ແລະພວກເຮົາກໍເຊື່ອວ່າບໍ່ມີພໍ່ຜູ້ໃດໃນໂລກເມື່ອລູກຂໍປາຈະເອົາງູໃຫ້. ຫລືເມື່ອລູກຂໍເຂົ້າຈີ່ຈະເອົາກ້ອນຫີນໃຫ້. ຍິ່ງກວ່ານັ້ນ, ພຣະບິດາເຈົ້າສະຫວັນຜູ້ເຕັມພຽບດ້ວຍຄວາມຮັກເມດຕາຈະບໍ່ປະທານສິ່ງທີ່ຈຳເປັນເມື່ອລູກຂອງພຣະອົງວອນຂໍບໍ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການພາວະນາ. ເພາະການພາວະນາແມ່ນການເປັນໜຶ່ງດຽວກັບພຣະເຈົ້າຜູ້ຊົງຮັກພວກເຮົາ, ຜູ້ຊົງພ້ອມທີ່ຈະສະດັບຟັງຄຳວອນຂໍຂອງພວກເຮົາ, ຜູ້ຊົງປາດຖະໜາໃຫ້ພວກເຮົາໄດ້ຮອດແລະມີຊີວິດ. ສ່ວນພວກເຮົາ, ພວກເຮົາໄດ້ມີເວລາໃຫ້ພຣະເຈົ້າໃນຄຳພາວະນາບໍ? ໃນຍາມທົດສອບ, ໃນຍາມອັນຕະລາຍ ກໍຄືໃນຍາມຮັບຜົນສຳເລັດ, ໃນຍາມສະໜຸກສຸກສະບາຍພວກເຮົາໄດ້ຄິດຫາພຣະເຈົ້າໃນຄຳພາວະນາບໍ? ຖ້າພວກເຮົາຍັງເຢັນເສີຍຕໍ່ການພາວະນາກໍຂໍພຣະຈິດເຈົ້າຊ່ວຍເຜົາສູມດວງໃຈພວກເຮົາໃຫ້ມີຄວາມຮັກຮ້ອນຮົນສັດທາຫລາຍຂຶ້ນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ